Moms in Prayer INTERNATIONAL™

ກຸ່ມອະທິຖານຮ່ວມກັນຂອງບັນດາແມ່

# ພຣະເຈົ້າຊົງສາມາດ

**ສັນລະເສີນ**—*ຍ້ອງຍໍສັນລະເສີນໃນຄວາມເປັນພຣະເຈົ້າ, ໃນຄຸນລັກສະນະ, ໃນພຣະນາມ ຫຼື ໃນພຣະລັກສະນະຂອງພຣະອົງ. ບໍ່ມີການຂໍໃນການອະທິຖານເທື່ອ.*

**ພຣະລັກສະນະ: ພຣະເຈົ້າຊົງສາມາດ** **Attribute: God Is Able**

**ຄວາມໝາຍ**: ຜູ້ຊົງມີລິດອຳນາດ ແລະ ຊັບພະຍາກອນອັນຫຼວງຫຼາຍ.

**ຂໍ້ພະຄຳພີ:**

- **2 ໂກຣິນໂທ 9:8** ແລະພຣະເຈົ້າຊົງມີຣິດອຳນາດທີ່ຈະອວຍພອນພວກເຈົ້າທັງຫຼາຍຢ່າງອຸດົມສົມບູນ, ເພື່ອໃຫ້ພວກເຈົ້າມີທຸກສິ່ງທຸກຢ່າງທີ່ຈຳເປັນຕະຫຼອດເວລາ, ທັງຈະມີສິ່ງຂອງຄົບບໍລິບູນສຳລັບການງານດີທຸກຢ່າງດ້ວຍ.
- **ເອເຟໂຊ 3:20-21** ຂໍໃຫ້ພຣະກຽດເປັນຂອງພຣະອົງຜູ້ຊົງສາມາດກະທຳການນອກເໜືອສາລະພັດສິ່ງ ຫຼາຍກ່ວາທີ່ເຮົາຈະຂໍ ຫຼື ຈິນຕະນາການໄດ້ຕາມລິດອຳນາດທີ່ກະທຳການພາຍໃນຕົວເຮົາ. ຂໍຖວາຍພຣະກຽດແກ່ພຣະເຈົ້າໃນຄຣິສຕະຈັກແລະໃນພຣະເຢຊູຄຣິດທຸກຍຸກທຸກສະໄໝ, ຕະຫຼອດໄປເປັນນິດ! ອາແມນ.
- **ເຮັບເຣີ 7:25** ດ້ວຍເຫດນີ້ ພຣະອົງຈຶ່ງສາມາດທີ່ຈະໂຜດໃຫ້ພົ້ນເອົາຄົນທັງປວງທີ່ເຂົ້າມາຫາພຣະເຈົ້າຜ່ານທາງພຣະເຢຊູເອງນັ້ນ ເພາະວ່າພຣະອົງຊົງພະຊົນຢູ່ເພື່ອຊ່ວຍທູນຂໍພຣະກະລຸນາຕາງໜ້າຜູ້ຄົນເຫຼົ່ານັ້ນ.

**ການສາລະພາບບາບ**—ໃຫ້ສາລະພາບບາບຂອງເຈົ້າຢ່າງງຽບໆຕໍ່ພະເຈົ້າຜູ້ຊົງໃຫ້ອະໄພ.

ຖ້າເຮົາສາລະພາບຄວາມບາບຂອງພວກເຮົາ,ພຣະອົງຊົງສັດຊື່ແລະທ່ຽງທຳທີ່ຈະໃຫ້ອະໄພການບາບເຫຼົ່ານັ້ນ,ທັງຍັງສຳລະເຮົາໃຫ້ຂາວສະອາດຈາກການອະທຳທັງປວງ. 1 ໂຢຮັນ 1:9

**ການຂອບພະຄຸນ**—ໃຫ້ຂອບໃຈພະເຈົ້າສຳລັບສິ່ງທີ່ພະອົງໄດ້ຊົງກະທຳ. ບໍ່ມີການຮ້ອງຂໍໃນການອະທິຖານເທື່ອ.

ໃນທຸກໆສິ່ງຢ່າງ ຈົ່ງຂອບພະຄຸນ; ເພາະນີ້ຄືເຊິ່ງທີ່ພະເຈົ້າຕ້ອງການຈາກເຮົາທີ່ຢູ່ໃນພຣະເຢຊູຄຣິດເຈົ້າ. 1 ເທສະໂລນິກ 5:18

**ການເຂົ້າຫາພະເຈົ້າແທນຜູ້ອື່ນ**—ນີ້ເປັນການອະທິຖານຫາພະເຈົ້າແທນຜູ້ອື່ນຫຼືເພື່ອຄົນອື່ນ.ໃຫ້ຕັ້ງກຸ່ມອະທິຖານ 2-3 ຄົນ.

**ລູກໆຂອງພວກເຮົາ**—ແມ່ແຕ່ລະຄົນເລືອກລູກຄົນໜຶ່ງທີ່ຈະອະທິຖານເພື່ອ.

ທຳອິດໃຫ້ອະທິຖານຕາມພະຄຳພີ ແລ້ວອະທິຖານຂໍສິ່ງທີ່ຕ້ອງການເພື່ອລູກຄົນນັ້ນ.

**ຂໍ້ພະຄຳພີ: 2 ໂກຣິນໂທ 9:8**

**ຄຳອະທິຖານຕາມພະຄຳພີ:** ຂໍໃຫ້ (ຊື່ຂອງລູກ) ຮູ້ວ່າພຣະອົງຈະໃຫ້ລາວເຕັມໄປດ້ວຍພຣະກະລຸນາຂອງພຣະອົງ, ເພື່ອວ່າໃນທຸກສິ່ງທຸກຢ່າງແລະທຸກເວລາ, (ຊື່ຂອງລູກ) ຈະມີທຸກສິ່ງທີ່ຈຳເປັນ, ລາວຈະມີສິ່ງຂອງຄົບບໍລິບູນສຳລັບການງານດີທຸກຢ່າງ.

**ຄຳຮ້ອງຂໍສະເພາະເຈາະຈົງ:**

**ຄູ ຫຼື ພະນັກງານ**—ໃຊ້ຂໍ້ພະຄຳພີຂ້າງລຸ່ມນີ້ ຫຼື ຂໍ້ພະຄຳສຳລັບລູກໆ ເພື່ອອະທິຖານເພື່ອຄູ/ພະນັກງານຄົນໃດໜຶ່ງ. ແລ້ວອະທິຖານຂໍສິ່ງສະເພາະເຈາະຈົງເພື່ອຄົນໆນັ້ນ.

- ຂໍພະເຈົ້າເປີດຕາ __________ ແລະ ປ່ຽນລາວໃຫ້ຫັນຈາກຄວາມມືດສູ່ແສງສະຫວ່າງ, ຈາກການຢູ່ໃຕ້ອຳນາດຂອງມານຊາຕານ ສູ່ການເພິ່ງພາລິດເດດຂອງພຣະຜູ້ເປັນເຈົ້າ, ເພື່ອລາວຈະໄດ້ຮັບການອະໄພບາບ ແລະ ກາຍເປັນໜຶ່ງໃນຜູ້ທີ່ຖືກຊ່ວຍໃຫ້ພົ້ນໂດຍຄວາມເຊື່ອໃນພຣະເຢຊູ. *ກິດຈະການ 26:18*

**ບັນຫາເລື່ອງໂຮງຮຽນ:**

1. ອະທິຖານໃຫ້ມີການຟື້ນຟູຝ່າຍວິນຍານໃນໂຮງຮຽນ.
2. ອະທິຖານຂໍການປົກປ້ອງໃຫ້ແກ່ຄູອາຈານ ແລະ ນັກຮຽນທັງຫຼາຍ.
3. ອະທິຖານເພື່ອບັນຫາຕ່າງໆໃນໂຮງຮຽນ.

**ບັນດາແມ່ໆອະທິຖານເພື່ອ:**

1. ອະທິຖານເພື່ອໂຮງຮຽນຕ່າງໆທົ່ວໂລກ, ແລະ ກຸ່ມຕ່າງໆໃຫ້ຕັ້ງໝັ້ນຄົງ.
2. ຂໍການປົກປ້ອງເພື່ອພັກລັດ, ການຮັບໃຊ້ຕ່າງໆໃຫ້ມີຄວາມສັດຊື່ບໍລິສຸດ ແລະ ບໍ່ແຕກແຍກກັນ.

*ຈື່ໄວ້ວ່າ, ສິ່ງທີ່ອະທິຖານຢູ່ໃນກຸ່ມ ຄວນຈະຖືກເກັບໄວ້ໃນກຸ່ມເທົ່ານັ້ນ!*